ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

======000======

1849
ເລກທີ........./ກປ.99

ກະຊວງກະສິກຳ ແລະ ປ່າໄມ້
ຫ້ອງວ່າການ ແຂວງ ວຽງຈັນ
ເລກທີ 667
ວັນທີ 13.10.99

# ຄຳສັ່ງແນະນຳ

## ຂອງລັດຖະມົນຕີກ່ຽວກັບການຂຶ້ນທະບຽນສວນປູກ

ພະແນກກະສິກຳ-ປ່າໄມ້ແຂວງວຽງຈັນ
ເລກທີ 862/ກພ
ວັນທີ 22/10/99

===000===

**ເຖິງ:** ທົ່ວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງ,ກຳແພງນະຄອນ ແລະ ເຂດພິເສດ.

-ອີງຕາມກົດໝາຍປ່າໄມ້ ສະບັບເລກທີ 01-96 ລົງວັນທີ 11/10/1996.

-ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີສະບັບເລກທີ 11/ນຍ ລົງວັນທີ 23/8/1999 ວ່າດ້ວຍການຄຸ້ມຄອງວຽກງານປ່າໄມ້ ແລະ ການທຸລະກິດໄມ້.

ເພື່ອເຮັດໃຫ້ສວນປູກໄມ້ໄດ້ຖືກຄຸ້ມຄອງຢ່າງມີປະສິດທິຜົນສູງ ແລະ ສາມາດເກັບກຳຕົວເລກສວນປູກໄມ້ທີ່ມີຄຸນນະພາບ ແລະ ຮັບປະກັນ ທາງດ້ານເສດຖະກິດ ດ້ວຍຮູບການຂຶ້ນທະບຽນສວນປູກໄມ້ທີ່ຖາວອນ,ໝັ້ນຄົງ ແລະ ເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

## ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ອອກຄຳສັ່ງແນະນຳດັ່ງລຸ່ມນີ້:

1. ສວນປູກໄມ້ທີ່ມີເງື່ອນໄຂຂຶ້ນທະບຽນຕ້ອງມີມາດຖານດັ່ງນີ້:
   1.1 ຕ້ອງມີເນື້ອທີ່ແຕ່ 1.600 ຕາລາງແມດ (1 ໄລ່) ຂຶ້ນໄປ
   1.2 ຕົ້ນໄມ້ທຸກຊະນິດທີ່ປູກໃນເນື້ອທີ່ຕ້ອງມີອາຍຸ ແຕ່ 3 ປີ ຂຶ້ນໄປ
   1.3 ຈຳນວນຕົ້ນໄມ້ທີ່ປູກຕ້ອງມີອັດຕາການລອດຕາຍແຕ່ 80% ຂຶ້ນໄປຂອງຈຳນວນ... ທີ່ປູກໃນເບື້ອງຕົ້ນ

   <u>ລະອຽດມີຄືດັ່ງລຸ່ມນີ້:</u>

   - ປູກລະຍະ 2× 2 ແມັດ ຕ້ອງມີຕົ້ນໄມ້ແຕ່ 320ຕົ້ນຂຶ້ນໄປ ຕໍ່ 1.600 ຕາລາງແມັດ ຫລື 2.000 ຕົ້ນຂຶ້ນໄປ ຕໍ່1 ເຮັກ...
   - ປູກລະຍະ 3× 2 ແມັດ ຕ້ອງມີ ຕົ້ນໄມ້ ແຕ່ 212ຕົ້ນ ຂຶ້ນໄປ ຕໍ່ 1.600 ຕາລາງແມັດຫລື 1.325ຕົ້ນຂຶ້ນໄປ ຕໍ່1 ເຮັກ...
   - ປູກລະຍະ 3× 3 ແມັດ ຕ້ອງມີຕົ້ນໄມ້ ແຕ່142 ຕົ້ນ ຂຶ້ນໄປຕໍ່ 1.600 ຕາລາງແມັດຫລື 880 ຕົ້ນຂຶ້ນໄປ ຕໍ່ 1 ເຮັກຕາ
   - ປູກລະຍະ 5× 2 ແມັດ ຕ້ອງມີຕົ້ນໄມ້ ແຕ່128 ຕົ້ນຂຶ້ນໄປ 1.600 ຕາລາງແມັດຫລື 800 ຕົ້ນຂຶ້ນໄປ ຕໍ່ 1 ເຮັກຕາ

   1.4 ຕົ້ນໄມ້ທີ່ປູກຕ້ອງມີຂະໜາດລວງສູງແຕ່ 5 ແມັດຂຶ້ນໄປສຳລັບໄມ້ໃຫຍ່ໄວ ແລະ ແຕ່ 3 ແມັດຂຶ້ນໄປສຳລັບໄມ້ໃຫຍ່ຊ້າ.
   1.5 ຕົ້ນໄມ້ທີ່ປູກຕ້ອງມີໜ້າຕ້າງພຽງເອິກ (1.30 ແມັດ ນັບແຕ່ໜ້າດິນຂຶ້ນໄປ ) ແຕ່ 5 ຊັງຕີແມັດຂຶ້ນໄປສຳລັບໄມ້ໃຫຍ່ໄວ ແລະ ແຕ່ 2,5 ຊັງຕີແມັດ ຂຶ້ນໄປສຳລັບໄມ້ໃຫຍ່ຊ້າ.

2. ເຈົ້າຂອງສວນປູກຕ້ອງປະກອບເອກະສານດັ່ງນີ້:

2.1 ໃບຢັ້ງຢືນກຳມະສິດຄອບຄອງທີ່ດິນ

2.2 ໃບຕິດຕາມເສັຽພາສີທີ່ດິນ

2.3 ໃບສະເໜີຂອງຜູ້ກ່ຽວ

2.4 ໃບຢັ້ງຢືນທີ່ຢູ່ຂອງຜູ້ກ່ຽວ

3. ເຈົ້າຂອງສວນປູກໄມ້ຕ້ອງນຳເອົາເອກະສານທີ່ກ່າວມາຂ້າງເທິງໄປສະເໜີ ຕໍ່ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງບ່ອນທີ່ສວນປູກຕັ້ງຢູ່ເພື່ອດຳເນີນການວັດແທກຂອບເຂດເນື້ອທີ່ສວນປູກໄມ້,ຂັ້ນຕົ້ນ ໃຫ້ກຳນົດຮູບແບບ ແລະ ລະຍະຂອງການປູກ ແລະ ຊະນິດໄມ້ເພື່ອສ້າງເປັນແຜນວາດ ແລະ ອອກໃບຢັ້ງຢືນໃຫ້.

4. ສວນປູກໄມ້ທີ່ໄດ້ຮັບການຂຶ້ນທະບຽນຖືກຕ້ອງຕາມລະບຽບຫລັກການແມ່ນຈະໄດ້ຮັບການຍົກເວັ້ນພາສີທີ່ດິນ ພ້ອມດຽວກັນນັ້ນລັດຖະບານຍັງຮັບປະກັນ ກ່ຽວກັບກຳມະສິດຂອງຜູ້ປູກ ຊຶ່ງມີສິດຄອບຄອງ,ນຳໃຊ້,ໄດ້ຮັບໝາກຜົນ,ໂອນ,ສືບທອດ ແລະ ມີສິດໄດ້ຮັບການທົດແທນຢ່າງສົມເຫດສົມຜົນເມື່ອມີການໂອນຄືນເປັນຂອງລັດ ຫລືລັດມີຄວາມຕ້ອງການນຳໃຊ້ທີ່ດິນສວນປູກໄມ້ເຂົ້າໃນກິດຈະການສ້າງສາອື່ນໆ ລັດຈະເປັນຜູ້ທົດແທນຄ່າເສັຽຫາຍຢ່າງສົມເຫດສົມຜົນ.

ເຈົ້າຂອງສວນປູກໄມ້ມີສິດຂາຍໄມ້ປູກຂອງຕົນໄດ້ ໂດຍຈະໄດ້ຮັບການຍົກເວັ້ນຄ່າບູລະນະ ແລະ ຄ່າຊັບພະຍາກອນທັງໝົດ ແຕ່ຕ້ອງເສັຽພາສີລາຍໄດ້ໃຫ້ລັດຕາມລະບຽບການ

ສຳລັບການນຳໃຊ້ ເຂົ້າໃນການປູກສ້າງ ແລະ ສ້ອມແປງເຮືອນຊານຂອງຕົນ ຫລື ຂອງສ່ວນລວມທີ່ຮັບໃຊ້ສາທາລະນະປະໂຫຍດ ເຊັ່ນ: ໂຮງຮຽນ,ໂຮງໝໍ,ສຸກສາລາ,ວັດ,ເຮືອຊ່ວງ ແລະ ອື່ນໆ ຊຶ່ງແມ່ນການບໍລິຈາກຂອງເຈົ້າຂອງສວນປູກໄມ້ ໂດຍບໍ່ມີການຊື້ຂາຍແຕ່ຢ່າງໃດນັ້ນ ແມ່ນຈະໄດ້ຮັບການຍົກເວັ້ນ ຄ່າບູລະນະ,ຄ່າຊັບ ຄ່າຊັບພະຍາກອນ ແລະ ຄ່າພາສີລາຍໄດ້.

5. ການອອກໃບທະບຽນສວນປູກໄມ້

5.1 ສວນປູກໄມ້ທີ່ມີເນື້ອທີ່ ແຕ່ 5 ເຮັກຕາລົງມາ ແມ່ນໜ້າທີ່ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໂດຍແມ່ນຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງເປັນຜູ້ເຊັນຮັບຮອງໃບທະບຽນສວນປູກໄມ້

5.2 ສວນປູກໄມ້ທີ່ມີເນື້ອທີ່ ຫລາຍກວ່າ 5 ເຮັກຕາຂຶ້ນໄປແມ່ນໜ້າທີ່ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ,ກຳແພງນະຄອນ ແລະ ເຂດພິເສດ ໂດຍແມ່ນຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ,ກຳແພງນະຄອນ ແລະ ເຂດພິເສດເປັນຜູ້ເຊັນຮັບຮອງໃບທະບຽນສວນປູກໄມ້ຕາມການຄົ້ນຄວ້ານຳສະເໜີຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງທີ່ກ່ຽວຂ້ອງ

6. ຄ່າຂຶ້ນທະບຽນສວນປູກໄມ້

-ຄ່າຂຶ້ນທະບຽນສວນປູກໄມ້ແມ່ນໃຫ້ຄິດໄລ່ເອົາໃນລາຄາ 1.000 ກີບ ຕໍ່ 1.600 ຕາລາງແມັດ ຫລື 1 ໄລ່.

7. ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ,ກຳແພງນະຄອນ,ເຂດພິເສດ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງເປັນຜູ້ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້,ມີການຕິດຕາມ ກວດກາ ປະເມີນຜົນ ແລະ ສັງລວມຈຳນວນ ສວນປູກໄມ້ ທີ່ປູກທົດແທນ ແລະ ສວນປູກໄມ້ທີ່ລົງທຶນປູກເອງ ພາຍໃນທ້ອງຖິ່ນທີ່ຕົນຮັບຜິດຊອບ ແລະ ຈັດຕັ້ງເຜີຍແຜ່ນະໂຍບາຍສົ່ງເສີມ,ລະບຽບການ,ມາດຖານເຕັກນິກ ແລະ ຂັ້ນຕອນຕ່າງໆຂອງການປູກໄມ້ໃຫ້ກວ້າງຂວາງໃນໝູ່ມະຫາຊົນ.

8. ຄຳສັ່ງແນະນຳສະບັບນີ້ມີຜົນນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ,ວັນທີ.........07 OCT 1999
ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້

ສ່ຽນ ສະພັງທອງ

<u>ບ່ອນນຳສົ່ງ</u>

-ຫ້ອງວ່າການສູນກາງພັກ (ເພື່ອຊາບ ແລະ ໄຂ້ຕາງລາຍງານ )
-ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ( ______ ______)
-ກະຊວງການເງິນ (ເພື່ອຊາບ )
-ກະຊວງການຄ້າ ແລະ ທ່ອງທ່ຽວ (ເພື່ອຊາບ )
-ຫ້ອງວ່າການແຂວງ,ກຳແພງນະຄອນ ແລະ ເຂດພິເສດ (ເພື່ອຊາບ )
-ກົມປ່າໄມ້ (ເພື່ອຕິດຕາມການຈັດຕັ້ງປະຕິບັດ )
-ເກັບມ້ຽນ